ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກກ້ວຍ

(ສະບັບທົດລອງ)



ຂຽນໂດຍ: ທ້າວ ຄໍາຫຼ້າ ສາມິງທະວົງ
ຂໍ້ມູນຈາກ: ບ້ານ ນາໄຜ່ ເມືອງຄໍາ ແຂວງຊຽງຂວາງ

ປີ 2007

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກກ້ວຍ

ຮີບໂຮມ ແລະຈັດໜ້າໂດຍ: ທ້າວ ຄຳຫລ້າ ພອນມະນີວົງ
ແຕ້ມໂດຍ: ທ້າວ ຄຳຫລ້າ ພອນມະນີວົງ
ຜູ້ຮຽບຮຽງ: ອ.ຈ ໂພໄຊ ຈັນທະວົງສາ
ເຈົ້າຂອງ: ສຶກສາເມືອງຄຳ ແຂວງຊຽງຂວາງ

PDF created with pdfFactory Pro trial version www.pdffactory.com

## ຄຳນຳ

ປື້ມຄວາມຮູ້ພູມປັນຍາທ້ອ້ງຖິ່ນເຫຼັ້ມນີ້ໄດ້ບັນຈຸເອົາເນື້ອໃນ, ຂັ້ນຕອນການປະຕິບັດຕ່າງໆລວມທັງຄຸນປະໂຫຍດຂອງການປູກກ້ວຍທ້ອງຖິ່ນ ບ້ານ. ນາປາ ເມືອງ ຄຳ. ແຂວງຊຽງຂວາງໂດຍແມ່ນຄູເຝິກຊຸມຊົນເປັນຜູ້ ໃຫ້ຂໍ້ມູນແລະຂຽນດ້ວຍຕົນເອງໂດຍຜ່ານການຮັບຮອງແລະຮຽບຮຽງຈາກຫ້ອງການສຶກສາປະຈຳເມືອງ. ພະແນກສຶກສາປະຈຳແຂວງ,ສູນອົບຮົມຮ່ວມພັດທະນາ, ກົມພາລະ ແລະສິລະປະສຶກສາ (ກະຊວງສຶກສາທິການ).

ປື້ມເຫຼັ້ມນີ້ຄະນະຈັດທຳມີຈຸດປະສົງແນະນຳ ແລະຈັດທຳຂຶ້ນເພື່ອເປັນຄູ່ມື ແລະເປັນບ່ອນອີງໃຫ້ແກ່ຄູອາຈານໃນການສິດສອນວິຊາພູມປັນຍາທ້ອງ ຖິ່ນ, ດັ່ງນັ້ນຄູຕ້ອງເລືອກຫົວຂໍ້ທີ່ເໝາະສົມກັບໄວອາຍຸຂອງເດັກໃນແຕ່ລະຂັ້ນ ຮຽນໂດຍອີງຕາມສະມັດຕະພາບຂອງບົດສອນເຊິ່ງໄດ້ລະບຸໄວ້ໃນແຜນການ ສອນປະຈຳປີ, ປະຈຳເດືອນ ແລະ ປະຈຳອາທິດ,ເຖິງຢ່າງໃດກໍຕາມຄູຕ້ອງ ໄດ້ເອົາໃສ່ຕື່ມໃນການເອົາຄວາມຮູ້ທ້ອງຖິ່ນເຂົ້າມາສິດສອນເພື່ອເຮັດໃຫ້ເນື້ອ ໃນຂອງຂະບວນການຮຽນຮູ້ຂອງເດັກນ້ອຍມີຄວາມສົມບູນແລະມີຄວາມສອດ ຄ່ອງກັບຄວາມເປັນຈິງຫຼາຍຂຶ້ນ.

ຄະນະຈັດທຳປື້ມຄວາມຮູ້ພູມປັນຍາທ້ອງຖິ່ນເຫຼັ້ມນີ້ຄິດວ່າເນື້ອໃນຍັງມີຫຼາຍອັນທີ່ຍັງບໍ່ທັນສົມບູນ, ຄົບຖ້ວນແລະຂາດຫາຍໄປພວກເຮົາຫວັງຢ່າງຍິ່ງວ່າຄົງຈະໄດ້ຮັບຄຳຕຳນິຕິຊົມຈາກຄູ-ອາຈານຜູ້ທີ່ຊົມໃຊ້ທຸກທ່ານ,ພວກເຮົາ ພ້ອມແລ້ວທີ່ຈະປັບປຸງປື້ມຄວາມຮູ້ພູມປັນຍາທ້ອງຖິ່ນເຫຼັ້ມນີ້ໃຫ້ສົມບູນຂຶ້ນແລະ ຂໍຂອບໃຈລ່ວງໜ້າກ່ຽວກັບຄຳຕຳນິຕິຊົມຂອງທ່ານທີ່ມີຕໍ່ພວກເຮົາ.

ຄະນະຈັດທຳ



## ຮູບ ແລະປະຫວັດຂອງຜູ້ຂຽນ

ຊື່ ທ້າວ ຄຳຫຼ້າ ສາມົງທະວົງ

ອາຍຸ 50 ປີ

ອາຊີບ: ປະຊາຊົນ

## ເຫດຜົນຂອງຜູ້ຂຽນບົດ:

ຂຽນບົດນີ້ຂຶ້ນມາເພື່ອຢາກໃຫ້ລູກຫຼານໄດ້ຮູ້ຈັກວິທີການປູກກ້ວຍແບບໄດຮັບຜົນດີແລະງາຍຕໍ່ການປູກແບບພູມປັນຍາບ້ານເຮົາໃຫ້ຄົງຢູ່ກັບຊຸມຊົນເຮົາຕະຫຼອດໄປ.

PDF created with pdfFactory Pro trial version www.pdffactory.com

## ເພງ: ໝາກກ້ວຍ

ໝາກກ້ວຍ　　ໝາກກ້ວຍໝາກກ້ວຍ
ງາມອ້ວຍລ້ວຍ　　ເປັນໜ່ວຍຕື່ງດີ
ກ້ວຍຫອມ　　ຫຼືກ້ວຍທະນີ (ຊ້ຳ)
ເບິ່ງໃຫ້ດີ　　ກ້ວຍນ້ຳກ້ວຍໄຂ່ (ຊ້ຳ)

## ຄວາມເປັນມາ

ຕົ້ນກ້ວຍນີ້ແມ່ນມີມາແຕ່ດົນນານແລ້ວ,ຄົນລາວເຮົາເຄີຍນິຍົມກັນປູກໃນເບື້ອງຕົ້ນກໍປູກແບບເອົາເປັນຕົ້ນມາປູກແຕ່ມາເຖິງປະຈຸບັນແມ່ນໄດ້ມີຫົວຄິດແບບໃໝ່ນັ້ນກໍຄືເອົາເຫງົ້າກ້ວຍປິ່ນຂຶ້ນເທິງເຫັນວ່າວິທີນີ້ແມ່ນໄດ້ຮັບຜົນດີໜໍ່ກ້ວຍແຕກອອກມາເທື່ອລະຫຼາຍຕາສະນັ້ນຈິ່ງໄດ້ວິທີນີ້ປູກມາເຖິງປະຈຸບັນ.

PDF created with pdfFactory Pro trial version www.pdffactory.com

## ອຸປະກອນ

ແນວກ້ວຍ (ເຫງົ້າກ້ວຍ)



ພ້າ



### ກາບ: ຕົ້ນກ້ວຍ

ຕົ້ນກ້ວຍນີ້ ປູກງ່າຍອີ່ຫຼີ
ເພາະເຮົາມີ ວິທີການປູກ
ເພື່ອໃຫ້ລູກ ໜໍ່ກ້ວຍປົ່ງຫຼາຍ
ເອົາທາງປາຍ ລົງດິນຖົມໄວ້
ໜໍ່ກ້ວຍໃໝ່ ຈະປົ່ງອອກມາ
ແຕ່ລະຕາ ອອກມາອ້ອມເຫງົ້າ

### ເຊີ້ງ: ມາພ້ອມກັນປູກ

ໂຮ.........ໆ.. ຮິວ.......ໆ...
ມາພວກເຮົາມາ ພາກັນປູກກ້ວຍ
ຢູ່ຕາມແຄມຫ້ວຍ ຫຼືດິນເປົ່າຫວ່າງ
ຈະຢູ່ແຄມທາງ ຫຼືວ່າແຄມບ້ານ
ຖ້າເຮົາບໍ່ຄ້ານ ປູກໃຫ້ຫຼາຍໆ
ນຳເອົາໄປຂາຍ ເພື່ອເປັນສິນຄ້າ
ໃນເມື່ອພາຍໜ້າ ເຮົາຈະຮັ່ງມີ
ໂຮ.........ໆ.. ເຮີວ.......ໆ...

PDF created with pdfFactory Pro trial version www.pdffactory.com

## ຄຸນປະໂຫຍດຂອງໃບກ້ວຍ.

ໃບກ້ວຍເຮົາສາມາດເອົາມານຳໃຊ້ໄດ້ຫຼາຍຢ່າງເຊັ່ນ: ເຮັດໝາກເບັງ,ປູພາເຂົ້າມຸງຕູບສຳລັບພັກຜ່ອນ,ຫໍ່ໝົກກໍໄດ້....

## ຄຸນປະໂຫຍດຂອງໝາກກ້ວຍ.

ໝາກກ້ວຍມີຄຸນປະໂຫຍດຫຼາຍຢ່າງເຊັ່ນ:ກິນກໍໄດ້ເຮັດນ້ຳຫວານກໍໄດ້,ຈີ່..

## ຄຸນປະໂຫຍດ

ປູກກ້ວຍແບບນີ້ແມ່ນໄດ້ຮັບຜົນດີອອກໜໍ່ງາມ ແລະກໍອອກຫຼາຍກົກພ້ອມກັນປູກເຫງົ້າໜຶ່ງມັນສາມາດອອກມາ 3-4 ກົກ, ບໍ່ສິ້ນເປືອງແນວພັນໃນການປູກບົວລະບັດງ່າຍ

## ຫຼັກການທີ່ສຳຄັນ

ເວລາທີ່ເອົາເຫງົ້າກ້ວຍລົງຂຸມແລ້ວຫ້າມບໍ່ໃຫ້ປີ້ນເຫງົ້າກ້ວຍເພາະຈະເຮັດໃຫ້ຕາຂອງໜໍ່ກ້ວຍນັ້ນຂາດຫຼືບົ້ງ.

## ບົດເລກ

ກ້ວຍເຫງົ້າໜຶ່ງສາມາດເອົາໄປປູກ ແລະແຕກອອກໜໍ່ໄດ້ 4 ໜໍ່ຖ້າເອົາເຫງົ້າກ້ວຍໄປປູກ 9 ເຫງົ້າຈະໄດ້ກ້ວຍຈັກໜໍ່?

ຊວ້ານ



ຈົກ



PDF created with pdfFactory Pro trial version www.pdffactory.com

## ການເລືອກໜໍ່ກ້ວຍມາປູກ

ເລືອກເອົາໜໍ່ອອກໃໝ່ ( ບໍ່ອ່ອນ,ບໍ່ແກ່ ) ເອົາໜໍ່ໃຫຍ່ງາມ ເລືອກເອົາໜໍ່ກ້ວຍທີ່ມີອາຍຸພວມຂະຫຍາຍ ບໍ່ຄວນເອົາຈາກຕົ້ນກ້ວຍທີ່ໃກ້ຈະຂຸດໄຊມ.

## ລະດູການປູກ

ກຽມດິນໃຫ້ສໍາເລັດລະຫວ່າງເດືອນມີນາ - ເມືອອອກເດືອນເມສາ ( ເດືອນ 5 ລາວ ) ກໍເລີ້ມປູກໄດ້ໂລດ ( ປູກກ່ອນລະດູຝົນ,ຖ້າຝົນຕົກຫຼາຍຈະພາໃຫ້ປາຍໜໍ່ເນົ່າ )

## ວິທີປູກ

ເອົາເຫງົ້າກ້ວຍມາແລະກໍເອົາພ້າຖາກຮາກນ້ອຍທີ່ມີຢູ່ອ້ອມເຫງົ້າກ້ວຍໃຫ້ໝົດ,ແລະກໍຕັດປາຍກ້ວຍຖິ້ມໃຫ້ຈົ່ງແຕ່ຫົວເຫງົ້າກ້ວຍໄວ້.



## ການຂຸດຂຸມແລະກຽມດິນ

ຂຸດຂຸມສໍາລັບທີ່ຈະເອົາກ້ວຍລົງປູກໃຫ້ເລິກປະມານ 2 ຄືບ (40 ຊັງຕີແມັດ)ກວ້າງ 2 ຄືບ( 40 ຊັງຕີແມັດ) ແລະກໍເອົາເຫງົ້າກ້ວຍລົງຂຸມໃນການເອົາລົງນັ້ນຕ້ອງເອົາທາງປາຍກ້ວຍລົງແລ້ວກໍເອົາດິນຖົມການທີ່ເອົາດິນມາຖົມແມ່ນຕ້ອງຂຸດເອົາດິນບ່ອນໃໝ່ມາຖົມບໍ່ໃຫ້ເຕັມຂຸມເທື່ອແລ້ວຈຶ່ງເອົາດິນທີ່ເຮົາຂຸດຂຸມກ້ວຍນັ້ນມາຖົມອີກເທື່ອໜຶ່ງໃຫ້ເຕັມ.



## ລັກສະນະຕົ້ນກ້ວຍ

ຕົ້ນກ້ວຍເປັນຕົ້ນທີ່ບໍ່ໃຫຍ່ ແລະສູງຫຼາຍມີຮູບຮ່າງກົກໃຫຍ່ແຕ່ປາຍຂອງມັນສ້ວຍບໍ່ມີງ່າແຕ່ມີກ້ານເນື້ອຕົ້ນອ່ອນ,ມີນໍ້າຫຼາຍລໍາຕົ້ນມື່ນ.

## ລັກສະນະໃບກ້ວຍ

ໃບກ້ວຍມີລັກສະນະໃບໃຫຍ່ ແລະໃຫຍ່ກວ່າໃບອື່ນໆ,ມີລັກສະນະສີຂຽວ.

PDF created with pdfFactory Pro trial version www.pdffactory.com